ສຳນັກງານໃຫຍ່

ເລກທີ: 055 /ທຄຕລ.ສພບ.2026
ນະຄອນຫຼວງວຽງຈັນ, ວັນທີ: 25 SEP 2026

ມະຕິ

ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ

ຄັ້ງທີ 03 ປະຈຳປີ 2026, ວັນທີ 25/09/2026

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 03 ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນ ແຕ່ເວລາ 10:00 ຫາ 11:45 ໂມງ ຂອງວັນທີ 25/09/2026 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈຸມຄຳ, ປະທານສະພາບໍລິຫານຂອງ ທຄຕລ. ມີສະມາຊິກສະພາບໍລິຫານ ເຂົ້າຮ່ວມ 07 ທ່ານ ຈາກທັງໝົດ 08 ທ່ານ (ສະມາຊິກສະພາບໍລິຫານ 01 ທ່ານ ທີ່ບໍ່ສາມາດເຂົ້າຮ່ວມໄດ້ ຄື: ທ່ານນາງ ລັດດາວັນ ຊົງວິໄລ). ນອກຈາກນີ້, ຍັງມີຄະນະອຳ ນວຍການ ແລະ ຫົວໜ້າພະແນກທີ່ກ່ຽວຂ້ອງ ເຂົ້າຮ່ວມໃນຖານະຜູ້ສັງເກດການ.

ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:

1) ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານບາເຊ ii ປະຈຳໄຕມາດ 03/2026;
2) ຮັບຊາບລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານທາງການເງິນ (IFRS) ຂອງ ທຄຕລ ປະຈຳໄຕມາດ 03/2026;
3) ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານກວດກາພາຍໃນ ປະຈຳໄຕມາດ 03/2026;
4) ຮັບຊາບລາຍງານການດຳເນີນທຸລະກິດຂອງ ທຄຕລ ຮອດເດືອນ 08/2026;
5) ຮັບຮອງນະໂຍບາຍ ວ່າດ້ວຍ ການຄຸ້ມຄອງຄວາມສ່ຽງດ້ານຕະຫຼາດ;
6) ຮັບຮອງການເພີ່ມບໍລິສັດປະເມີນມູນຄ່າຊັບສິນພາຍນອກ ຈຳນວນ 01 ບໍລິສັດ;
7) ຮັບຮອງການສະເໜີຂໍກູ້ຢືມເງິນຂອງລູກຄ້າບໍລິສັດ ຈຳນວນ 01 ລາຍການ ທີ່ຢູ່ໃນຂອບເຂດສິດອະນຸມັດຂອງສະພາບໍລິຫານ;

ປະທານສະພາບໍລິຫານ

ສຸລິວັດ ສຸວັນນະຈຸມຄຳ